# ຕັ້ງລະຫັດປະຈຳຕົວສຳລັບບັດ SUN Bucks 2025 ຂອງທ່ານກ່ອນທີ່ສິດທິປະໂຫຍດຈະໝົດອາຍຸ!

SUN Bucks ຊ່ວຍໃຫ້ຄອບຄົວສາມາດຊື້ເຄື່ອງໃຊ້ຂອງແຫ້ງສຳລັບເດັກນ້ອຍທີ່ມີສິດໄດ້ຮັບຄວາມຊ່ວຍເຫຼືອໃນຊ່ວງໂຮງຮຽນປິດເທີມ. ບັດ SUN Bucks ແຕ່ລະໃບມີເງິນບັນຈຸຈຳນວນ 120 ໂດລາ
ແລະອາດຈະມາຮອດໃນເວລາທີ່ແຕກຕ່າງກັນຕະຫຼອດລະດູຮ້ອນສຳລັບເດັກນ້ອຍແຕ່ລະຄົນ. **ການໃຊ້ສິດປະໂຫຍດ SUN Bucks ບໍ່ມີຜົນຕໍ່ສະຖານະການເຂົ້າເມືອງຂອງຄອບຄົວທ່ານ.**

## ນີ້ແມ່ນສິ່ງທີ່ຕອງເຮັດເມື່ອທ່ານໄດ້ຮັບບັດ SUN 2025 ຂອງທ່ານທາງໄປສະນີ

### ວິທີໃຊ້ບັດ SUN Bucks ຂອງທ່ານ...

ຕັ້ງລະຫັດປະຈຳຕົວ (PIN) ສຳລັບບັດຂອງທ່ານໂດຍເຂົ້າສູ່ລະບົບແອັບພລິເຄຊັນມືຖື ebtEDGE, ເຂົ້າສູ່ລະບົບເວັບໄຊ www.ebt.ca.gov ຫຼືໂທຫາສາຍດ່ວນ SUN Bucks ທີ່ເບີ (877) 328-9677.
**ກວດສອບໃຫ້ແນ່ໃຈວ່າທ່ານໄດ້ໃຊ້ເງິນ SUN Bucks ກ່ອນໃຊ້ສິດປະໂຫຍດ CalFresh ແລະພາຍໃນ 122 ຫຼັງຈາກທີ່ມີການເຕີມເງິນໃສ່ໃນບັດຂອງທ່ານ.**

### ຖ້າທ່ານບໍ່ຕ້ອງການໃຊ້ບັດ SUN Bucks 2025 ຂອງທ່ານ...

ໂທຫາສາຍດ່ວນຂອງ SUN Bucks ທີ່ເບີ (877) 328-9677
ເພື່ອເວົ້າລົມກັບສູນໂທກ່ຽວກັບການເລືອກທີ່ຈະບໍ່ເຂົ້າຮ່ວມໂຄງການ SUN Bucks ສຳລັບປີ 2025.
**ທ່ານສາມາດທຳລາຍບັດ SUN Bucks ໄດ້ຫຼັງເລືອກອອກຈາກໂຄງການ.**

## ສິ່ງທີ່ທ່ານສາມາດຊື້ໄດ້ດ້ວຍບັດ SUN Bucks:

- ໝາກໄມ້ແລະຜັກ
- ຜະລິດຕະພັນນົມ
- ເມັດພັນພືດ ແລະພືດທີ່ໃຫ້ຜົນຜະລິດເປັນອາຫານສຳລັບຄົວເຮືອນ
- ຊີ້ນ, ສັດປີກ ແລະປາ
- ເຂົ້າຈີ່ແລະຊີເຣຍວ
- ອາຫານອື່ນໆ ເຊັ່ນ: ອາຫານຫວ່າງ ແລະ ເຄື່ອງດື່ມທີ່ບໍ່ມີເຫຼົ້າ

## ສິ່ງທີ່ທ່ານບໍ່ສາມາດຊື້ໄດ້ດ້ວຍບັດ SUN Bucks:

**ບໍ່ສາມາດ**ນຳໃຊ້ບັດ SUN Bucks ເພື່ອຊື້ອາຫານຮ້ອນ, ອາຫານສັດລ້ຽງ, ອຸປະກອນທຳຄວາມສະອາດຫຼືໃຊ້ໃນຄົວເຮືອນ, ເຄື່ອງໃຊ້ເພື່ອອະນາໄມສ່ວນບຸຄຄົນ ຫຼືຢາປົວພະຍາດ.

ເດັກນ້ອຍທີ່ໄດ້ຮັບ SUN Bucks **ສາມາດ** ເຂົ້າຮ່ວມໂຄງການອາຫານລະດູຮ້ອນອື່ນໆໃນຊຸມຊົນຂອງເຂົາເຈົ້າໄດ້ເຊັ່ນກັນ. ຖ້າຕ້ອງການຊອກຫາທີ່ຕັ້ງທີ່ຢູ່ໃກ້ທ່ານທີ່ສຸດ ກະລຸນາໂທຫາ 1-866-3-HUNGRY (1-877-8-HAMBRE), ພິມ "ອາຫານ" ຫຼື "SFSP" ໄປທີ່ເບີ 1-914-342-7744 ຫຼືເຂົ້າໄປທີ່ www.fns.usda.gov/summer/sitefinder.

## ຕ້ອງການຮຽນຮູ້ເພີ່ມເຕີມບໍ?

- ໄປທີ່ http://www.cdss.ca.gov/SUNBucks.
- ລອງເບິ່ງ CDSS YouTube SUN Bucks Playlist.
- ສະແກນລະຫັດຕອບກັບດ່ວນ (QR).

ໂຄງການ SUN Bucks ໃນລັດຄາລີຟໍເນຍໄດ້ຮັບການສະໜັບສະໜູນເງິນທຶນຈາກໜ່ວຍງານ ບໍລິການອາຫານແລະໂພຊະນາການ (FNS) ກະຊວງກະສິກຳສະຫະລັດ ອາເມຣິກາ (USDA) ແລະນຳສະເໜີໃຫ້ແກ່ທ່ານໂດຍພະແນກສັງຄົມສົງເຄາະລັດຄາລີຟໍເນຍ (CDSS) ຮ່ວມກັບພະແນສຶກສາທິການລັດຄາລີຟໍເນຍ(CDE).
www.cdss.ca.gov/sunbucks | www.cde.ca.gov/ls/nu/sf | SUNBucks@dss.ca.gov.
USDA ເປັນຜູ້ໃຫ້ບໍລິການ, ນາຍຈ້າງ ແລະຜູ້ໃຫ້ກູ້ທີ່ໃຫ້ໂອກາດເທົ່າທຽມກັນ. 2025
ຖ້າຕ້ອງການຂໍ້ມູນເພີ່ມເຕີມ ໄປທີ່: www.fns.usda.gov/summer.